ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------=== 000 ===-----

ຄະນະກຳມະການຄຸ້ມຄອງຫຼັກຊັບ ເລກທີ: 0010/ຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 24 FEB 2017

# ຂໍ້ຕົກລົງ
# ວ່າດ້ວຍການຊື້ຮຸ້ນໂດຍບໍ່ວາງເງິນມັດຈຳລ່ວງໜ້າ
# ໃນຕະຫຼາດຫຼັກຊັບ ຢູ່ ສປປ ລາວ

- ອີງຕາມກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 21/ສພຊ, ລົງວັນທີ 10 ທັນວາ 2012;
- ອີງຕາມດຳລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 188/ນຍ, ລົງວັນທີ 24 ທັນວາ 2013;
- ອີງຕາມການຄົ້ນຄ້ວານຳສະເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ສະບັບເລກທີ 063/ສຄຄຊ, ລົງວັນທີ 01 ກຸມພາ 2017.

ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດ ຫຼັກການ ແລະ ມາດຕະການ ກ່ຽວກັບການຊື້ຮຸ້ນ ໂດຍບໍ່ວາງເງິນມັດຈຳລ່ວງໜ້າ ເພື່ອອຳນວຍຄວາມສະດວກ ໃຫ້ແກ່ຜູ້ລົງທຶນໃນການຊື້ຮຸ້ນ ໃນຕະຫຼາດຫຼັກຊັບ ຢູ່ ສປປ ລາວ ແນໃສ່ສ້າງສະພາບຄ່ອງໃຫ້ແກ່ຕະຫຼາດຫຼັກຊັບ ພ້ອມທັງຮັບປະກັນໃຫ້ມີຄວາມເປັນລະບຽບ ຮຽບຮ້ອຍ, ໂປ່ງໃສ ແລະ ຍຸຕິທຳ.

**ມາດຕາ 2 ການຊື້ຮຸ້ນໂດຍບໍ່ວາງເງິນມັດຈຳລ່ວງໜ້າ**

ການຊື້ຮຸ້ນໂດຍບໍ່ວາງເງິນມັດຈຳລວງໜ້າ ແມ່ນການຊື້ຮຸ້ນ ໂດຍບໍ່ວາງເງິນມັດຈຳກ່ອນການສົ່ງຄຳສັ່ງຊື້ຮຸ້ນ, ພາຍຫຼັງຄຳສັ່ງຊື້ຮຸ້ນ ຖືກຈັບຄູ່ ຜູ້ລົງທຶນຕ້ອງຊຳລະເງິນໃນວັນຊຳລະ (T+2 ພາຍໃນເວລາ 14:00 ໂມງ ຂອງ ສປປ ລາວ).

**ມາດຕາ 3 ອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ລົງທຶນ ໝາຍເຖິງ** ຜູ້ລົງທຶນປະເພດສະຖາບັນ ທັງພາຍໃນ ແລະ ຕ່າງປະເທດ ທີ່ໃຊ້ບໍລິການຂອງ ທະນາຄານດູແລຊັບສິນ;
2. **ບໍລິສັດຫຼັກຊັບ ໝາຍເຖິງ** ບໍລິສັດທີ່ໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃຫ້ເປັນນາຍໜ້າຊື້-ຂາຍຫຼັກຊັບ.
3. **ລະບົບການຊອກຮູ້ຂໍ້ມູນກ່ຽວກັບລູກຄ້າ** (Know Your Customers /Customer Due Diligence ຂຽນຫຍໍ້ KYC/CDD) **ໝາຍເຖິງ** ມາດຕະການພາຍໃນຂອງ ທະນະຄານດູແລຊັບສິນ ແລະ ບໍລິສັດຫຼັກຊັບ ເພື່ອການຊອກຮູ້ລູກຄ້າ ແລະ ການເພີ່ມທະວີການເອົາໃຈໃສ່ລູກຄ້າຂອງຕົນ ຕາມກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ຫຼື ນິຕິກຳກ່ຽວກັບວຽກງານດັ່ງກ່າວ;
4. **ທະນາຄານຕົວແທນເພື່ອການຊຳລະ ໝາຍເຖິງ** ທະນາຄານທຸລະກິດ ທີ່ເຮັດໜ້າທີ່ຊຳລະ ແລະ ຮັບເງິນ ໃນການຊື້-ຂາຍຮຸ້ນ;
5. **ທະນາຄານດູແລຊັບສິນ ໝາຍເຖິງ** ທະນາຄານທຸລະກິດ ພາຍໃນ ຫຼື ຕ່າງປະເທດ ທີ່ໄດ້ຮັບອະນຸຍາດຈາກ ຄະນະກຳມະການຄຸ້ມຄອງຫຼັກຊັບ ໃຫ້ເຮັດໜ້າທີ່ ເປັນຜູ້ຮັກສາ ແລະ ຄຸ້ມຄອງຊັບສິນຂອງຜູ້ລົງທຶນ;
6. **ວັນຊຳລະ ໝາຍເຖິງ** ວັນທີຊຳລະເງິນ ແລະ ສົ່ງມອບຮຸ້ນ ເຊິ່ງເກີດຂຶ້ນໃນວັນທີ 2 **(T+2 ພາຍໃນເວລາ 14:00 ໂມງ ຂອງ ສປປ ລາວ)** ຫຼັງຈາກມື້ທີ່ມີການຊື້ຮຸ້ນ;
7. **ການຄຳນວນຜົນສຸດທິກ່ຽວກັບເງິນ ແລະ ຮຸ້ນ ໝາຍເຖິງ** ຍອດເງິນ ແລະ ຮຸ້ນ ສຸດທິ ທີ່ສະມາຊິກຂອງຕະຫຼາດຫຼັກຊັບ ຕ້ອງຊຳລະ ແລະ ສົ່ງມອບ ພາຍຫຼັງສິ້ນສຸດການຊື້ຮຸ້ນ ໃນແຕ່ລະວັນ ໂດຍອີງຕາມຜົນການຈັບຄູ່ຄຳສັ່ງຊື້-ຂາຍຮຸ້ນ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ຕະຫຼາດຫຼັກຊັບ, ບໍລິສັດຫຼັກຊັບ, ທະນາຄານດູແລຊັບສິນ, ທະນາຄານຕົວແທນເພື່ອການຊຳລະ, ຜູ້ລົງທຶນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການເຄື່ອນໄຫວຊື້ຮຸ້ນ ໂດຍບໍ່ວາງເງິນມັດຈຳລ່ວງໜ້າ.

## ໝວດທີ 2
## ຂັ້ນຕອນການຊື້ຮຸ້ນ ໂດຍບໍ່ວາງເງິນມັດຈຳລ່ວງໜ້າ

**ມາດຕາ 5 ການເປີດບັນຊີຊື້ຮຸ້ນ ໂດຍບໍ່ວາງເງິນມັດຈຳລ່ວງໜ້າ**

ຜູ້ລົງທຶນ ຕ້ອງເປີດບັນຊີຊື້ຮຸ້ນ ໂດຍບໍ່ວາງເງິນມັດຈຳລ່ວງໜ້າ ດັ່ງນີ້:

1. ເປີດບັນຊີເງິນຝາກສຳລັບຊື້-ຂາຍຮຸ້ນ ກັບທະນາຄານຕົວແທນເພື່ອການຊຳລະ ແລະ ທະນາຄານດູແລຊັບສິນ;
2. ເປີດບັນຊີຫຼັກຊັບ ກັບບໍລິສັດຫຼັກຊັບ ຕາມລະບຽບການຂອງບໍລິສັດຫຼັກຊັບ ຕາມການເຫັນດີ ຢ່າງເປັນລາຍລັກອັກສອນຈາກຄະນະອຳນວຍການ ຂອງບໍລິສັດຫຼັກຊັບ.

**ມາດຕາ 6 ການດຳເນີນການຊື້ຮຸ້ນ ໂດຍບໍ່ວາງເງິນມັດຈຳລ່ວງໜ້າ**

ການຊື້ຮຸ້ນ ໂດຍບໍ່ວາງເງິນມັດຈຳລ່ວງໜ້າ, ຜູ້ລົງທຶນ ຕ້ອງປະຕິບັດຕາມ ລະບຽບການຊື້-ຂາຍຫຼັກຊັບຂອງຕະຫຼາດຫຼັກຊັບ.

## ໝວດທີ 3
## ການສະສາງ-ຊຳລະ ການຊື້ຮຸ້ນ ໂດຍບໍ່ວາງເງິນມັດຈຳລ່ວງໜ້າ

**ມາດຕາ 7 ການສະສາງ ການຊື້ຮຸ້ນ ໂດຍບໍ່ວາງເງິນມັດຈຳລ່ວງໜ້າ**

ການສະສາງ ການຊື້ຮຸ້ນ ໂດຍບໍ່ວາງເງິນມັດຈຳລ່ວງໜ້າ ແມ່ນປະຕິບັດຕາມ ກົນໄກຂອງຕະຫຼາດຫຼັກຊັບ.

**ມາດຕາ 8 ການຊຳລະ ການຊື້ຮຸ້ນ ໂດຍບໍ່ວາງເງິນມັດຈຳລ່ວງໜ້າ**

ການຊຳລະ ການຊື້ຮຸ້ນ ໂດຍບໍ່ວາງເງິນມັດຈຳລ່ວງໜ້າ ມີສອງກໍລະນີ ດັ່ງນີ້:

1. ຜູ້ລົງທຶນ ສາມາດຊຳລະ ພາຍໃນວັນຊຳລະ ຕາມການກຳນົດຂອງຕະຫຼາດຫຼັກຊັບ;
2. ຜູ້ລົງທຶນ ບໍ່ສາມາດຊຳລະ ພາຍໃນວັນຊຳລະ ຕາມການກຳນົດຂອງຕະຫຼາດຫຼັກຊັບ.

ກໍລະນີ ຜູ້ລົງທຶນ ສາມາດຊຳລະ ພາຍໃນວັນຊຳລະ ຕາມການກຳນົດຂອງຕະຫຼາດຫຼັກຊັບ ໃຫ້ປະຕິບັດການຊຳລະ ຕາມກົນໄກຂອງຕະຫຼາດຫຼັກຊັບ ຄືກັນກັບການຊື້ຫຼັກຊັບ ຂອງຜູ້ລົງທຶນ ທີ່ວາງເງິນມັດຈຳລ່ວງໜ້າ.

ກໍລະນີ ຜູ້ລົງທຶນ ບໍ່ສາມາດຊຳລະ ພາຍໃນວັນຊຳລະ ຕາມການກຳນົດຂອງຕະຫຼາດຫຼັກຊັບ ໃຫ້ປະຕິບັດດັ່ງນີ້:

1. ບໍລິສັດຫຼັກຊັບ ຕ້ອງຊຳລະເງິນແທນຜູ້ລົງທຶນ ທີ່ເປັນລູກຄ້າຂອງຕົນ ຕາມມູນຄ່າການຄຳນວນຜົນສຸດທິ ທີ່ຕະຫຼາດຫຼັກຊັບຮຽກເກັບ ແລະ ຮຸ້ນຈະຕົກເປັນກຳມະສິດຂອງບໍລິສັດຫຼັກຊັບ. ແຫຼ່ງທຶນຂອງບໍລິສັດຫຼັກຊັບ ເພື່ອຊຳລະແທນລູກຄ້າ ມີ ສອງ ແຫຼ່ງ ຄື: ນຳໃຊ້ເງິນຂອງບໍລິສັດຫຼັກຊັບ ແລະ ນຳໃຊ້ເງິນກູ້ຢືມ ຫຼື ສັນຍາອື່ນ ຈາກທະນາຄານທຸລະກິດໃດໜຶ່ງ ເພື່ອຮັບປະກັນການຊຳລະແທນຜູ້ລົງທຶນ.

1.1. ກໍລະນີ ນຳໃຊ້ເງິນຂອງບໍລິສັດຫຼັກຊັບ ເພື່ອຊຳລະແທນຜູ້ລົງທຶນ ບໍລິສັດຫຼັກຊັບ ຕ້ອງໂອນເງິນເຂົ້າບັນຊີເງິນຝາກຂອງຕົນ ທີ່ຢູ່ນຳທະນາຄານຕົວແທນເພື່ອການຊຳລະ ເພື່ອຊຳລະແທນ ຜູ້ລົງທຶນໃນວັນຊຳລະ;

1.2. ກໍລະນີ ນຳໃຊ້ເງິນກູ້ຢືມ ຫຼື ສັນຍາອື່ນ ຈາກທະນາຄານທຸລະກິດໃດໜຶ່ງ ເພື່ອຊຳລະແທນຜູ້ລົງທຶນ ບໍລິສັດຫຼັກຊັບ ຕ້ອງສະເໜີຕໍ່ທະນາຄານທຸລະກິດ ທີ່ຕົນໄດ້ເຊັນສັນຍາຮ່ວມກັນ ເພື່ອດຳເນີນການໂອນເງິນເຂົ້າບັນຊີເງິນຝາກຂອງຕົນ ທີ່ຢູ່ນຳທະນາຄານຕົວແທນເພື່ອການຊຳລະ ເພື່ອຊຳລະແທນຜູ້ລົງທຶນໃນວັນຊຳລະ;

2. ຕະຫຼາດຫຼັກຊັບ ຕ້ອງໂອນຮຸ້ນ ຂອງຜູ້ລົງທຶນ ທີ່ຖືກຈັບຄູ່ໄປແລ້ວນັ້ນ ເຂົ້າບັນຊີຫຼັກຊັບຂອງບໍລິສັດຫຼັກຊັບ;
3. ຜູ້ລົງທຶນ ຕ້ອງຊຳລະເງິນຄືນໃຫ້ແກ່ບໍລິສັດຫຼັກຊັບ ຕາມມູນຄ່າທີ່ບໍລິສັດຫຼັກຊັບ ໄດ້ຊຳລະແທນຕົນໃນວັນຊຳລະ ລວມທັງ ດອກເບ້ຍ, ຄ່າປັບໃໝ ແລະ ລາຍຈ່າຍອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບຂອງບໍລິສັດຫຼັກຊັບ ແລະ ຕາມທີ່ໄດ້ຕົກລົງກັນໃນສັນຍາ.

**ມາດຕາ 9 ການໂອນຮຸ້ນທີ່ຊື້ ໂດຍບໍ່ວາງເງິນມັດຈຳລ່ວງໜ້າ**

ພາຍຫຼັງຜູ້ລົງທຶນ ຊຳລະເງິນຄືນຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 3 ມາດຕາ 8 ຂອງຂໍ້ຕົກລົງສະບັບນີ້ນີ້ແລ້ວ ບໍລິສັດຫຼັກຊັບ ຕ້ອງສະເໜີໃຫ້ຕະຫຼາດຫຼັກຊັບ ຢ່າງເປັນລາຍລັກອັກສອນ ເພື່ອໂອນຮຸ້ນຈຳນວນດັ່ງກ່າວຄືນ ໃຫ້ແກ່ຜູ້ລົງທຶນ.

ການໂອນຮຸ້ນ ຕາມຮູບແບບນີ້ ແມ່ນຈະໄດ້ຮັບການຍົກເວັ້ນ ຄ່າທຳນຽມ.

## ໝວດທີ 4
## ສິດ ແລະ ໜ້າທີ່ ຂອງຕະຫຼາດຫຼັກຊັບ, ບໍລິສັດຫຼັກຊັບ, ທະນາຄານດູແລຊັບສິນ, ທະນາຄານເພື່ອການຊຳລະ ແລະ ຜູ້ລົງທຶນ

**ມາດຕາ 10 ສິດ ແລະ ໜ້າທີ່ ຂອງຕະຫຼາດຫຼັກຊັບ**

ຕະຫຼາດຫຼັກຊັບ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງ ແລະ ພັດທະນາກົນໄກ ເພື່ອຮອງຮັບການເຄື່ອນໄຫວການຊື້ຮຸ້ນ ໂດຍບໍ່ວາງເງິນມັດຈຳລ່ວງໜ້າ;
2. ສ້າງລະບຽບ ແລະ ຄູ່ມື ເພື່ອນຳໃຊ້ໃນການຄຸ້ມຄອງ ກ່ຽວກັບການຊື້ຮຸ້ນ ໂດຍບໍ່ວາງເງິນມັດຈຳລ່ວງໜ້າ ໂດຍຜ່ານການຮັບຮອງ ຢ່າງເປັນລາຍລັກອັກສອນຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
3. ອຳນວຍຄວາມສະດວກ ແລະ ຮັບປະກັນ ການຊຳລະເງິນໃຫ້ທັນຕາມກຳນົດເວລາໃນວັນຊຳລະ. ກໍລະນີ ຜູ້ລົງທຶນ ບໍ່ສາມາດຊຳລະຄ່າຊື້ຮຸ້ນຕາມກຳນົດເວລາ ຕະຫຼາດຫຼັກຊັບ ຕ້ອງປ່ຽນຖານະຜູ້ຮັບຜິດຊອບຈາກ ທະນາຄານດູແລຊັບສິນ ມາເປັນ ບໍລິສັດຫຼັກຊັບ ຕາມການສະເໜີຢ່າງເປັນລາຍລັກອັກສອນ ຂອງບໍລິສັດຫຼັກຊັບ;
4. ໂອນຮຸ້ນ ຈາກບັນຊີຫຼັກຊັບຂອງບໍລິສັດຫຼັກຊັບ ໄປຫາ ບັນຊີຫຼັກຊັບ ຂອງຜູ້ລົງທຶນທີ່ຢູ່ນຳທະນາຄານດູແລຊັບສິນ ພາຍໃນກຳນົດເວລາໜຶ່ງວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບໜັງສືສະເໜີຈາກບໍລິສັດຫຼັກຊັບ ເປັນຕົ້ນໄປ;

5. ຕິດຕາມ ການຊື້ຮຸ້ນ ໂດຍບໍ່ວາງເງິນມັດຈຳລ່ວງໜ້າ ຂອງຜູ້ລົງທຶນ;
6. ຮຽກເອົາຂໍ້ມູນຂອງຜູ້ລົງທຶນ ຈາກບໍລິສັດຫຼັກຊັບ ໃນກໍລະນີ ທີ່ພົບເຫັນການເຄື່ອນໄຫວຊື້ຮຸ້ນ ໂດຍບໍ່ວາງເງິນມັດຈຳລ່ວງໜ້າ ທີ່ຜິດປົກກະຕິ;
7. ລາຍງານຂໍ້ມູນ ກ່ຽວກັບການຊື້ຮຸ້ນຂອງຜູ້ລົງທຶນຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບທັນທີ ໃນກໍລະນີ ທີ່ພົບເຫັນການເຄື່ອນໄຫວຊື້ຮຸ້ນ ຫຼື ການເຄື່ອນໄຫວອື່ນ ທີ່ຜິດປົກກະຕິ;
8. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ ແລະ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 11 ສິດ ແລະ ໜ້າທີ່ ຂອງບໍລິສັດຫຼັກຊັບ**

ບໍລິສັດຫຼັກຊັບ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງລະບົບ ແລະ ດຳເນີນ ການຊອກຮູ້ຂໍ້ມູນກ່ຽວກັບລູກຄ້າ ທີ່ມີຈຸດປະສົງຊື້ຮຸ້ນ ໂດຍບໍ່ວາງເງິນມັດຈຳລ່ວງໜ້າ;
2. ເປີດບັນຊີຊື້ຮຸ້ນ ໂດຍບໍ່ວາງເງິນມັດຈຳລ່ວງໜ້າ ໃຫ້ກັບຜູ້ລົງທຶນ ໂດຍຜ່ານການຮັບຮອງຈາກຄະນະອຳນວຍການຂອງບໍລິສັດຫຼັກຊັບ;
3. ອະນຸມັດວົງເງິນການຊື້ຮຸ້ນ ໂດຍບໍ່ວາງເງິນມັດຈຳລ່ວງໜ້າ ໃຫ້ແກ່ຜູ້ລົງທຶນ ຕາມທີ່ໄດ້ກຳນົດໄວ້ ໃນລະບຽບການພາຍໃນຂອງບໍລິສັດຫຼັກຊັບ;
4. ສ້າງລະບຽບ ແລະ ລະບົບຕິດຕາມການເຄື່ອນໄຫວ ກ່ຽວກັບການຊື້ຮຸ້ນ ໂດຍບໍ່ວາງເງິນມັດຈຳລ່ວງໜ້າ. ຮ່າງລະບຽບດັ່ງກ່າວ ຕ້ອງໄດ້ຜ່ານການຮັບຮອງ ຢ່າງເປັນລາຍລັກອັກສອນຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
5. ສ້າງຄູ່ມື ກ່ຽວກັບການຊື້ຮຸ້ນ ໂດຍບໍ່ວາງເງິນມັດຈຳລ່ວງໜ້າ ໂດຍລາຍງານຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
6. ເຊັນສັນຍາ ກັບ ຜູ້ລົງທຶນ ເພື່ອໃຫ້ບໍລິການຊື້ຮຸ້ນ ໂດຍບໍ່ວາງເງິນມັດຈຳລ່ວງໜ້າ. ຮ່າງສັນຍາດັ່ງກ່າວຕ້ອງຜ່ານການຮັບຮອງ ຢ່າງເປັນລາຍລັກອັກສອນຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
7. ເຊັນສັນຍາເງິນກູ້ ຫຼື ສັນຍາອື່ນ ກັບທະນາຄານທຸລະກິດ ເພື່ອຮັບປະກັນໃຫ້ມີເງິນພຽງພໍໃນການຊໍາລະແທນຜູ້ລົງທຶນ ແລະ ສຳເນົາສັນຍາດັ່ງກ່າວ ສົ່ງໃຫ້ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ເພື່ອຊາບ ແລະ ສົ່ງໃຫ້ທະນາຄານແຫ່ງ ສປປ ລາວ ເພື່ອເປັນບ່ອນອີງໃນການຫັກເງິນ ໃນວັນຊໍາລະ;
8. ສອບຖາມ ຖານະການເງິນຂອງຜູ້ລົງທຶນ ຜ່ານທະນາຄານດູແລຊັບສິນ ກ່ອນວັນຊຳລະ ເພື່ອຢັ້ງຢືນຄວາມພຽງພໍຂອງເງິນຂອງຜູ້ລົງທຶນ;
9. ແຈ້ງໃຫ້ ຕະຫຼາດຫຼັກຊັບ ຢ່າງເປັນລາຍລັກອັກສອນ ກ່ອນວັນຊຳລະ ເພື່ອປ່ຽນຖານະເປັນຜູ້ຮັບຜິດຊອບໃນການຊຳລະເງິນແທນຜູ້ລົງທຶນ ກໍລະນີ ຜູ້ລົງທຶນບໍ່ມີຖານະການເງິນພຽງພໍ;
10. ສະເໜີໂອນຮຸ້ນ ຈາກບັນຊີຫຼັກຊັບຂອງຕົນ ໄປຫາ ບັນຊີຫຼັກຊັບ ຂອງຜູ້ລົງທຶນທີ່ຢູ່ນຳທະນາຄານດູແລຊັບສິນ ພາຍໃນກຳນົດເວລາໜຶ່ງວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບການຊຳລະເງິນຄືນຄົບຖ້ວນຈາກຜູ້ລົງທຶນ ເປັນຕົ້ນໄປ;

11. ເກັບຄ່າບໍລິການຕ່າງໆ ທີ່ກ່ຽວຂ້ອງການຊື້ຮຸ້ນ ໂດຍບໍ່ອ່າງເງິນມັດຈໍາລ່ວງໜ້າ ຕາມທີ່ໄດ້ກຳນົດໄວ້ໃນລະບຽບຂອງຕົນ;
12. ລາຍງານຂໍ້ມູນ ທີ່ກ່ຽວຂ້ອງກັບຜູ້ລົງທຶນທີ່ຕິດພັນກັບການຊື້ຮຸ້ນ ໂດຍບໍ່ອ່າງເງິນມັດຈໍາລ່ວງໜ້າຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ຊາບທັນທີ ໃນກໍລະນີ ພົບເຫັນການເຄື່ອນໄຫວຊື້ຮຸ້ນ ທີ່ຜິດປົກກະຕິ;
13. ລາຍງານຂໍ້ມູນ ກ່ຽວກັບບັນຊີຊື້ຮຸ້ນ ໂດຍບໍ່ອ່າງເງິນມັດຈໍາລ່ວງໜ້າ ຂອງຜູ້ລົງທຶນ ຕາມການຮຽກຮ້ອງຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ;
14. ປະຕິບັດພັນທະຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ເປັນຕົ້ນ ການຊອກຮູ້ລູກຄ້າ, ການເພີ່ມທະວີການເອົາໃຈໃສ່ລູກຄ້າ, ການລາຍງານທຸລະກໍາທີ່ສົງໃສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
15. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ ແລະ ຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ.

**ມາດຕາ 12 ສິດ ແລະ ໜ້າທີ່ ຂອງທະນາຄານດູແລຊັບສິນ**

ທະນາຄານດູແລຊັບສິນມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງລະບົບການຊອກຮູ້ຂໍ້ມູນກ່ຽວກັບລູກຄ້າ ແລະ ລະບົບການຕິດຕາມກວດກາ ໃນການໃຫ້ບໍລິການ ແລະ ການສະສາງ-ຊໍາລະ ຂອງຜູ້ລົງທຶນ ທີ່ເປັນລູກຄ້າຂອງຕົນ;
2. ເຊັນສັນຍາ ກັບ ຜູ້ລົງທຶນ ເພື່ອໃຫ້ບໍລິການຊື້ຮຸ້ນ ໂດຍບໍ່ອ່າງເງິນມັດຈໍາລ່ວງໜ້າ. ຮ່າງສັນຍາ ດັ່ງກ່າວຕ້ອງຜ່ານການຮັບຮອງ ຢ່າງເປັນລາຍລັກອັກສອນຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ;
3. ຕິດຕາມ ແລະ ຮຽກຮ້ອງ ໃຫ້ຜູ້ລົງທຶນທີ່ເປັນລູກຄ້າຂອງຕົນ ມາຊໍາລະເງິນຈາກການຊື້ຮຸ້ນ ໂດຍບໍ່ອ່າງເງິນມັດຈໍາລ່ວງໜ້າ ຕາມກໍານົດເວລາ;
4. ແຈ້ງຖານະການເງິນຂອງຜູ້ລົງທຶນ ຕາມການສອບຖາມຂອງບໍລິສັດຫຼັກຊັບ ກ່ອນວັນຊໍາລະ;
5. ສະໜອງຂໍ້ມູນຂອງຜູ້ລົງທຶນ ທີ່ເປັນລູກຄ້າຂອງຕົນ ຕາມການຮຽກຮ້ອງຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ;
6. ຕິດຕາມ ການເຄື່ອນໄຫວຂອງຜູ້ລົງທຶນ ທີ່ເປັນລູກຄ້າຂອງຕົນ ແລະ ລາຍງານຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບ ແລະ ບໍລິສັດຫຼັກຊັບ ໃນກໍລະນີ ທີ່ພົບເຫັນຜູ້ລົງທຶນເຄື່ອນໄຫວບໍ່ສອດຄ່ອງກັບລະບຽບການ;
7. ປະຕິບັດພັນທະຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ເປັນຕົ້ນ ການຊອກຮູ້ລູກຄ້າ, ການເພີ່ມທະວີການເອົາໃຈໃສ່ລູກຄ້າ, ການລາຍງານທຸລະກໍາທີ່ສົງໃສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
8. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ ແລະ ຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ.

**ມາດຕາ 13 ສິດ ແລະ ໜ້າທີ ຂອງທະນາຄານຕົວແທນເພື່ອການຊໍາລະ**

ທະນາຄານຕົວແທນເພື່ອການຊໍາລະ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເປີດບັນຊີເງິນຝາກເພື່ອຊື້-ຂາຍຮຸ້ນ;
2. ຊໍາລະ ແລະ ຮັບ ເງິນ ໃນການຊື້-ຂາຍຮຸ້ນ ສໍາລັບຜູ້ລົງທຶນ;
3. ປະຕິບັດພັນທະຂອງຕົນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ເປັນຕົ້ນ ການຊອກຮູ້ລູກຄ້າ, ການເພີ່ມທະວີການເອົາໃຈໃສ່ລູກຄ້າ, ການລາຍງານທຸລະກໍາທີ່ສົງໃສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
4. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ ແລະ ຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

**ມາດຕາ 14 ສິດ ແລະ ໜ້າທີ່ ຂອງຜູ້ລົງທຶນ**

ຜູ້ລົງທຶນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຊັນສັນຍາ ກັບບໍລິສັດຫຼັກຊັບ ແລະ ທະນາຄານດູແລຊັບສິນ ກ່ຽວກັບການຊື້ຮຸ້ນ ໂດຍບໍ່ວາງເງິນມັດຈໍາລ່ວງໜ້າ;
2. ຮຽກເອົາຂໍ້ມູນການເຄື່ອນໄຫວ ແລະ ຍອດຊັບສິນ ໃນບັນຊີຫຼັກຊັບຂອງຕົນ ຈາກບໍລິສັດຫຼັກຊັບ ແລະ ທະນາຄານດູແລຊັບສິນ;
3. ຮຽກເອົາຂໍ້ມູນການເຄື່ອນໄຫວ ແລະ ຍອດເຫຼືອ ໃນບັນຊີເງິນຝາກເພື່ອຊື້-ຂາຍຮຸ້ນ ຂອງຕົນ ຈາກທະນາຄານຕົວແທນເພື່ອການຊໍາລະ ແລະ ທະນາຄານດູແລຊັບສິນ;
4. ຍົກເລີກ ຫຼື ປ່ຽນການໃຊ້ບໍລິການຂອງ ທະນາຄານດູແລຊັບສິນ ຫຼື ບໍລິສັດຫຼັກຊັບ ໜຶ່ງ ໄປຫາ ທະນາຄານດູແລຊັບສິນ ຫຼື ບໍລິສັດຫຼັກຊັບ ອື່ນ;
5. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ ແລະ ຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ.

## ໝວດທີ 5
## ຂໍ້ຫ້າມ, ການໂຈະ ແລະ ການຍົກເລີກ ການຊື້ຮຸ້ນໂດຍບໍ່ວາງເງິນມັດຈໍາລ່ວງໜ້າ

**ມາດຕາ 15 ຂໍ້ຫ້າມ**

ຫ້າມ ຕະຫຼາດຫຼັກຊັບ, ບໍລິສັດຫຼັກຊັບ, ທະນາຄານດູແລຊັບສິນ, ທະນາຄານຕົວແທນເພື່ອການຊໍາລະ, ຜູ້ລົງທຶນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການເຄື່ອນໄຫວຊື້ຮຸ້ນ ໂດຍບໍ່ວາງເງິນມັດຈໍາລ່ວງໜ້າ ມີພຶດຕິກໍາໃດໜຶ່ງ ຕາມກໍານົດໃນກົດໝາຍວ່າດ້ວຍຫຼັກຊັບ ມາດຕາ 135, 137, 139 ແລະ 141 ນອກຈາກນັ້ນ ຍັງຫ້າມໃຫ້ມີພຶດຕິກໍາ ໃດໜຶ່ງ ດັ່ງນີ້:

1. ຕະຫຼາດຫຼັກຊັບ ລະເລີຍໜ້າທີ່ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 10 ຂອງຂໍ້ຕົກລົງສະບັບນີ້;

2. ບໍລິສັດຫຼັກຊັບ ສົມຮູ້ຮ່ວມຄິດ ກັບທະນາຄານດູແລຊັບສິນ ຫຼື ຜູ້ລົງທຶນ ເພື່ອດໍາເນີນການຊື້ຮຸ້ນ ໂດຍບໍ່ວາງເງິນມັດຈໍາລ່ວງໜ້າ ທີ່ບໍ່ສອດຄ່ອງກັບຂໍ້ຕົກລົງສະບັບນີ້ ແລະ ລະບຽບການອື່ນທີ່ກ່ຽວຂ້ອງຂອງຕະຫຼາດຫຼັກຊັບ;
3. ບໍລິສັດຫຼັກຊັບ, ທະນາຄານດູແລຊັບສິນ ໃຫ້ບໍລິການຜູ້ລົງທຶນ ທີ່ຖືກຈໍາກັດ ຫຼື ຖືກຫ້າມເຄື່ອນໄຫວໃນຂົງເຂດວຽກງານຫຼັກຊັບ ຈາກອົງການຄຸ້ມຄອງວຽກງານຫຼັກຊັບທັງພາຍໃນ ແລະ ຕ່າງປະເທດ;
4. ທະນາຄານຕົວແທນເພື່ອການຊໍາລະ ເປີດບັນຊີເງິນຝາກສໍາລັບຊື້-ຂາຍຮຸ້ນ ໃຫ້ຜູ້ລົງທຶນທີ່ຖືກກໍານົດລາຍຊື່ ເຂົ້າໃນບັນຊີລາຍຊື່ທີ່ຖືກສ້າງຂຶ້ນພາຍໃຕ້ຍັດຕິ S/RES/1267 ປີ 1999 ແລະ S/RES/1373 ປີ 2001 ແລະ ຍັດຕິອື່ນທີ່ກ່ຽວຂ້ອງ ຂອງສະພາຄວາມໝັ້ນຄົງ ອົງການສະຫະປະຊາຊາດ ຕາມທີ່ ສໍານັກງານຂໍ້ມູນຕ້ານການຟອກເງິນ ແຈ້ງເປັນແຕ່ລະໄລຍະ;
5. ບໍລິສັດຫຼັກຊັບ ເປີດບັນຊີຫຼັກຊັບ ໃຫ້ຜູ້ລົງທຶນທີ່ຖືກກໍານົດລາຍຊື່ ເຂົ້າໃນບັນຊີລາຍຊື່ທີ່ຖືກສ້າງຂຶ້ນຕາມທີ່ໄດ້ກໍານົດໄວ້ໃນຍັດຕິ S/RES/1267 ປີ 1999 ແລະ S/RES/1373 ປີ 2001 ແລະ ຍັດຕິອື່ນທີ່ກ່ຽວຂ້ອງ ຂອງສະພາຄວາມໝັ້ນຄົງ ອົງການສະຫະປະຊາຊາດ ຕາມທີ່ ສໍານັກງານຂໍ້ມູນຕ້ານການຟອກເງິນ ແຈ້ງເປັນແຕ່ລະໄລຍະ.

**ມາດຕາ 16 ການໂຈະການເຄື່ອນໄຫວຊື້ຮຸ້ນ ໂດຍບໍ່ວາງເງິນມັດຈໍາລ່ວງໜ້າ**

ບໍລິສັດຫຼັກຊັບ ສາມາດໂຈະການເຄື່ອນໄຫວຊື້ຮຸ້ນ ໂດຍບໍ່ວາງເງິນມັດຈໍາລ່ວງໜ້າ ຂອງຜູ້ລົງທຶນ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ພົບເຫັນການສະໜອງຂໍ້ມູນໂດຍບໍ່ຖືກຕ້ອງຂອງຜູ້ລົງທຶນ ພາຍຫຼັງເປີດບັນຊີຊື້ຮຸ້ນ ໂດຍບໍ່ວາງເງິນມັດຈໍາລ່ວງໜ້າ;
2. ຜູ້ລົງທຶນ ບໍ່ຊໍາລະເງິນ ຈາກການຊື້ຮຸ້ນ ໂດຍບໍ່ວາງເງິນມັດຈໍາລ່ວງໜ້າ ຕາມກໍານົດເວລາໃນວັນຊໍາລະ ເວັ້ນເສຍແຕ່ມີເຫດວິສຸດວິໄສ ຫຼື ມີເຫດຜົນ;
3. ຜູ້ລົງທຶນ ມີການຊື້ຮຸ້ນຜິດປົກກະຕິ ທີ່ອາດສົ່ງຜົນເສຍຫາຍຕໍ່ຜູ້ລົງທຶນລາຍອື່ນ ຫຼື ຕະຫຼາດຫຼັກຊັບ;
4. ເຈົ້າໜ້າທີ່ ທີ່ມີສິດອໍານາດ ສົງໄສວ່າ ເງິນໃນບັນຊີເງິນຝາກສໍາລັບຊື້ຮຸ້ນ ໂດຍບໍ່ວາງເງິນມັດຈໍາລ່ວງໜ້າ ໄດ້ມາຈາກ ການກະທໍາຜິດກົດໝາຍຂອງ ສປປ ລາວ ຫຼື ສາກົນ;
5. ຕາມການສະເໜີຈາກອົງການທີ່ມີສິດອໍານາດ;
6. ລະເມີດຂໍ້ຕົກລົງສະບັບນີ້ ແລະ ລະບຽບການອື່ນທີ່ກ່ຽວຂ້ອງໃນຂົງເຂດວຽກງານຫຼັກຊັບ ທີ່ບໍ່ກະທົບຕໍ່ການເຄື່ອນໄຫວຂອງຕະຫຼາດຫຼັກຊັບ.

ບໍລິສັດຫຼັກຊັບ ຕ້ອງແຈ້ງກ່ຽວກັບການໂຈະ ພ້ອມດ້ວຍສາເຫດ ແລະ ກໍານົດເວລາໃນແກ້ໄຂບັນຫາ ຕໍ່ຜູ້ລົງທຶນ ແລະ ທະນາຄານດູແລຊັບສິນ ພ້ອມທັງລາຍງານຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ພາຍໃນໜຶ່ງວັນລັດຖະການ ນັບແຕ່ວັນທີ່ໂຈະການເຄື່ອນໄຫວຊື້ຮຸ້ນ ໂດຍບໍ່ວາງເງິນມັດຈໍາລ່ວງໜ້າ.

ຜູ້ລົງທຶນ ທີ່ຖືກໂຈະການເຄື່ອນໄຫວຊື້ຮຸ້ນ ໂດຍບໍ່ວາງເງິນມັດຈໍາລ່ວງໜ້າ ບໍ່ສາມາດເຄື່ອນໄຫວຊື້ຮຸ້ນລວມທັງການຊື້ຮຸ້ນ ໂດຍວາງເງິນມັດຈໍາລ່ວງໜ້າຈົນກວ່າຈະສາມາດແກ້ໄຂໄດ້;

ບໍລິສັດຫຼັກຊັບ ຕ້ອງຍົກເລີກການໂຈະການເຄື່ອນໄຫວການຊື້ຮຸ້ນ ໂດຍບໍ່ວາງເງິນມັດຈຳລ່ວງໜ້າ ຂອງຜູ້ລົງທຶນ ທັນທີ ພາຍຫຼັງຜູ້ລົງທຶນ ຫຼື ທະນາຄານດູແລຊັບສິນ ແກ້ໄຂບັນຫາສຳເລັດ ພ້ອມທັງແຈ້ງຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ພາຍໃນໜຶ່ງວັນລັດຖະການ ນັບແຕ່ວັນທີ່ຍົກເລີກການໂຈະການເຄື່ອນໄຫວຊື້ຮຸ້ນ ໂດຍບໍ່ວາງເງິນມັດຈຳລ່ວງໜ້າ ເປັນຕົ້ນໄປ.

### ມາດຕາ 17 ການໂຈະການເຄື່ອນໄຫວບັນຊີເງິນຝາກສຳລັບຊື້-ຂາຍຮຸ້ນ

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມີສິດສັ່ງໂຈະການເຄື່ອນໄຫວບັນຊີເງິນຝາກສຳລັບຊື້-ຂາຍຮຸ້ນ ກໍລະນີ ຜູ້ລົງທຶນ ຖືກໂຈະການເຄື່ອນໄຫວຊື້ຮຸ້ນ ໂດຍບໍ່ວາງເງິນມັດຈຳລ່ວງໜ້າ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 3, 4, 5 ແລະ ຂໍ້ 6 ຂອງມາດຕາ 16 ຂອງຂໍ້ຕົກລົງສະບັບນີ້.

ບັນຊີເງິນຝາກສຳລັບຊື້-ຂາຍຮຸ້ນ ສາມາດກັບມາເຄື່ອນໄຫວປົກກະຕິໄດ້ ພາຍຫຼັງໄດ້ຮັບການຍົກເລີກການໂຈະການເຄື່ອນໄຫວຊື້ຮຸ້ນ ໂດຍບໍ່ວາງເງິນມັດຈຳລ່ວງໜ້າ ຕາມການເຫັນດີ ຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

### ມາດຕາ 18 ການຍົກເລີກການໃຫ້ບໍລິການ ການຊື້ຮຸ້ນ ໂດຍບໍ່ວາງເງິນມັດຈຳລ່ວງໜ້າ

ບໍລິສັດຫຼັກຊັບ ຕ້ອງຍົກເລີກການໃຫ້ບໍລິການ ການຊື້ຮຸ້ນ ໂດຍບໍ່ວາງເງິນມັດຈຳລ່ວງໜ້າ ຂອງຜູ້ລົງທຶນໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຜູ້ລົງທຶນ ຂໍຍົກເລີກການໃຊ້ບໍລິການ ດ້ວຍຄວາມສະໝັກໃຈ;
2. ຜູ້ລົງທຶນ ຍຸບເລີກ, ຖືກຍຸບເລີກ ກິດຈະການ ຫຼື ລົ້ມລະລາຍ;
3. ຜູ້ລົງທຶນ ຍົກເລີກການໃຊ້ບໍລິການ ຂອງທະນາຄານດູແລຊັບສິນ;
4. ທະນາຄານດູແລຊັບສິນ ຍົກເລີກການໃຫ້ບໍລິການແກ່ຜູ້ລົງທຶນ;
5. ຜູ້ລົງທຶນ ລະເມີດຂໍ້ຕົກລົງສະບັບນີ້ ແລະ ລະບຽບການອື່ນທີ່ກ່ຽວຂ້ອງໃນຂົງເຂດວຽກງານຫຼັກຊັບ ທີ່ມີຜົນກະທົບຕໍ່ການເຄື່ອນໄຫວຂອງຕະຫຼາດຫຼັກຊັບ;
6. ຜູ້ລົງທຶນ ບໍ່ແກ້ໄຂບັນຫາຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 16 ຂອງຂໍ້ຕົກລົງສະບັບນີ້.

ບໍລິສັດຫຼັກຊັບ ຕ້ອງແຈ້ງກ່ຽວກັບການຍົກເລີກການໃຫ້ບໍລິການ ການຊື້ຮຸ້ນ ໂດຍບໍ່ວາງເງິນມັດຈຳລ່ວງໜ້າຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບ, ທະນາຄານດູແລຊັບສິນ ແລະ ຜູ້ລົງທຶນພາຍໃນກຳນົດເວລາ ສາມວັນລັດຖະການ ນັບແຕ່ວັນທີ່ຍົກເລີກ ເປັນຕົ້ນໄປ.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 19 ນະໂຍບາຍຕໍ່ຜູ້ມີຜົນງານ

ຕະຫຼາດຫຼັກຊັບ, ບໍລິສັດຫຼັກຊັບ ທະນາຄານດູແລຊັບສິນ, ທະນາຄານຕົວແທນເພື່ອການຊຳລະ, ຜູ້ລົງທຶນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການເຄື່ອນໄຫວຊື້ຮຸ້ນ ໂດຍບໍ່ວາງເງິນມັດຈຳລ່ວງໜ້າ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ໄດ້ຮັບນະໂຍບາຍ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 20 ມາດຕະການຕໍ່ຜູ້ລະເມີດ**

ຕະຫຼາດຫຼັກຊັບ, ບໍລິສັດຫຼັກຊັບ, ທະນາຄານດູແລຊັບສິນ, ທະນາຄານຕົວແທນເພື່ອການຊໍາລະ, ຜູ້ລົງທຶນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການເຄື່ອນໄຫວຊື້ຮຸ້ນ ໂດຍບໍ່ວາງເງິນມັດຈໍາລ່ວງໜ້າ ທີ່ລະເມີດຂໍ້ຕົກລົງສະບັບນີ້ ໃນກໍລະນີເບົາ ແມ່ນຈະຖືກ ກ່າວເຕືອນ ແລະ ລົງວິໄນ.

ຕະຫຼາດຫຼັກຊັບ, ບໍລິສັດຫຼັກຊັບ, ທະນາຄານດູແລຊັບສິນ, ທະນາຄານຕົວແທນເພື່ອການຊໍາລະ, ຜູ້ລົງທຶນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການເຄື່ອນໄຫວຊື້ຮຸ້ນ ໂດຍບໍ່ວາງເງິນມັດຈໍາລ່ວງໜ້າ ທີ່ລະເມີດຂໍ້ຕົກລົງສະບັບນີ້ ໃນກໍລະນີໜັກ ຈະຖືກມາດຕະການປັບໃໝ ລາຍລະອຽດ ດັ່ງນີ້:

1. ຕະຫຼາດຫຼັກຊັບ ທີ່ລະເມີດຂໍ້ຫ້າມໃນຂໍ້ຕົກລົງສະບັບນີ້ ທີ່ມີຜົນກະທົບຕໍ່ການເຄື່ອນໄຫວຊື້ຮຸ້ນ ໂດຍບໍ່ວາງເງິນມັດຈໍາລ່ວງໜ້າ ຈະຖືກປະຕິບັດມາດຕະການ ກ່າວເຕືອນ, ລົງວິໄນ, ປັບໃໝ ແລະ ໂຈະການໃຫ້ບໍລິການ ບາງສ່ວນ ຫຼື ທັງໝົດ ຕາມການພິຈາລະນາຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ;
2. ບໍລິສັດຫຼັກຊັບ ສົມຮູ້ຮ່ວມຄິດ ກັບທະນາຄານດູແລຊັບສິນ ຫຼື ຜູ້ລົງທຶນ ເພື່ອດໍາເນີນການຊື້ຮຸ້ນ ໂດຍບໍ່ວາງເງິນມັດຈໍາລ່ວງໜ້າ ທີ່ບໍ່ສອດຄ່ອງຂໍ້ຕົກລົງສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງຂອງຕະຫຼາດຫຼັກຊັບ ຈະຖືກປັບໃໝ ໜຶ່ງເທົ່າຂອງມູນຄ່າການຊື້ຮຸ້ນທັງໝົດ;
3. ບໍລິສັດຫຼັກຊັບ ໃຫ້ບໍລິການແກ່ ຜູ້ລົງທຶນທີ່ຖືກຈໍາກັດ ຫຼື ຖືກຫ້າມເຄື່ອນໄຫວໃນຂົງເຂດວຽກງານຫຼັກຊັບ ຈາກອົງການຄຸ້ມຄອງວຽກງານຫຼັກຊັບທັງພາຍໃນ ແລະ ຕ່າງປະເທດ ຈະຖືກປັບໃໝ ຊາວລ້ານກີບ ຕໍ່ລາຍ;
4. ທະນາຄານດູແລຊັບສິນ ໃຫ້ບໍລິການຜູ້ລົງທຶນ ທີ່ຖືກຈໍາກັດ ຫຼື ຖືກຫ້າມເຄື່ອນໄຫວໃນຂົງເຂດວຽກງານຫຼັກຊັບ ຈາກອົງການຄຸ້ມຄອງວຽກງານຫຼັກຊັບທັງພາຍໃນ ແລະ ຕ່າງປະເທດ ຈະຖືກປັບໃໝ ຊາວລ້ານກີບ ຕໍ່ລາຍ;
5. ບໍລິສັດຫຼັກຊັບ ເປີດບັນຊີຫຼັກຊັບ ໃຫ້ຜູ້ລົງທຶນທີ່ຖືກກໍານົດລາຍຊື່ ເຂົ້າໃນບັນຊີລາຍຊື່ທີ່ຖືກສ້າງຂຶ້ນຕາມທີ່ໄດ້ກໍານົດໄວ້ໃນຍັດຕິ S/RES/1267 ປີ 1999 ແລະ S/RES/1373 ປີ 2001 ແລະ ຍັດຕິອື່ນທີ່ກ່ຽວຂ້ອງ ຂອງສະພາຄວາມໝັ້ນຄົງ ອົງການສະຫະປະຊາຊາດ ຕາມທີ່ ສໍານັກງານຂໍ້ມູນຕ້ານການຟອກເງິນ ແຈ້ງເປັນແຕ່ລະໄລຍະຈະຖືກປັບໃໝ ຊາວລ້ານກີບ ຕໍ່ລາຍ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 21 ການຈັດຕັ້ງປະຕິບັດ**

ຕະຫຼາດຫຼັກຊັບ, ບໍລິສັດຫຼັກຊັບ, ທະນາຄານດູແລຊັບສິນ, ທະນາຄານຕົວແທນເພື່ອການຊໍາລະ, ຜູລົງທຶນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການເຄື່ອນໄຫວຊື້ຮຸ້ນ ໂດຍບໍ່ວາງເງິນມັດຈໍາລ່ວງໜ້າ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນຢ່າງເຂັ້ມງວດ.

**ມາດຕາ 22  ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ

ຄະນະກຳມະການຄຸ້ມຄອງຫຼັກຊັບ
ປະທານ

ສົມດີ ດວງດີ